ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------000000-------------

ບໍລິສັດ ອີທີແອລ ມະຫາຊົນ

ພະແນກ ບໍລິຫານ

ວັນທີ 17/07/2013

# ບົດສະຫຼຸບ

ແຜນວຽກປະຈໍາອາທິດ ແລະ ທິດທາງແຜນການປະຕິບັດວຽກອາທິດຕໍ່ໄປ ຂອງພະແນກ ບໍລິຫານ

## I. ວຽກທີ່ປະຕິບັດໃນອາທິດຜ່ານມາ:

**ວຽກຫ້ອງການ:**

- ແກ້ໄຂເອກະສານປະຈໍາວັນ, ເອກະສານເບີກຈ່າຍ, ຂໍ້ຕົກລົງ.
- ຈັດຫ້ອງປະຊຸມ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຊຸມ.
- ຈັດສົ່ງເຄື່ອງ ຫຼື ອຸປະກອນຕ່າງໆໃຫ້ບັນດາ ສາຂາແຂວງ ອທອຈໍານວນ 5ຄັ້ງ.
- ໄດ້ມອບເຄື່ອງອຸປະຖໍາໝາກບຸດ 1ຊຸດ ແລະ ເສື້ອຍືດຄໍມົນ ອີທີແອລ ໃຫ້ແກ່ຊາວໜຸ່ມ-ແມ່ຍິງຮາກຖານກົມສື່ສານ, ກະຊວງ ປ້ອງກັນປະເທດ.
- ໄດ້ຊຸກຍູ້ເສື້ອຍືດຄໍມົນ ແລະ ນໍ້າດື່ມ ອີທີແອລ ໃນກິດຈະກໍາສະເຫຼີມສະຫຼອງເນື່ອງໃນວັນສ້າງຕັ້ງ ສະຫະພັນ ແມ່ຍິງລາວຄົບຮອບ 58ປີ.

**ວຽກງານຄຸ້ມຄອງຊັບສິນ:**

- ຕິດ ເດຕາມໃສ່ລະຫັດຊັບສິນເກີດຂຶ້ນໃໝ່ໃນເດືອນ.
- ສໍາເລັດ ການສໍາຫຼວດຖົມດິນແດງເດີນທາງເຂົ້າສະຖານນີ BTS ຫວ້ຍຫົງ (ຢູ່ໃນຂັ້ນຕອນ, ເອກະສານນໍາສະເໜີ).
- ໄດ້ພົວພັນ ແລະ ສົມທົບກັບ ອທອ ສາຂາແຂວງ ຊຽງຂວາງກ່ຽວກັບການກະກຽມກວດກາຜົນສໍາເລັດຄັ້ງສຸດທ້າຍ 100% ຂອງແຜນການກໍ່ສ້າງອາຄານສາຂາ ອທອ ເພື່ອໃຫ້ເກັບວຽກລະອຽດຄືນກ່ຽວກັບໜ້າວຽກທີ່ຍັງບໍ່ໄດ້ມາດຖານ.
- ສໍາເລັດການປະກອບເອກະສານຕ່າງໆ ແລະ ໃບຄິດໄລ່ລາຄາແຜນການກໍ່ສ້າງ-ດັດແກ້ບໍລິມາດເພີ່ມທີ່ບໍ່ນອນຢູ່ໃນສັນຍາ ຈໍານວນ 5 ແຜນການເພື່ອໃຫ້ຄະນະກວດສອບຄົ້ນຄວ້າພິຈາລະນາ.

**ວຽກງານຄຸ້ມຄອງພາຫະນະ:**

- ຈັດພາຫະນະຮັບໃຊ້ວຽກ ຕາມການສະເໜີຂອງ ແຕ່ລະພະແນກການ.
- ເບີກຈ່າຍ ແລະ ຄຸ້ມຄ້ອງນໍ້າມັນເຊື້ອໄຟແລະ ບໍາລຸງຮັກສາ ພາຫະນະທີ່ເປ່ເພ.

**ວຽກງານຈັດຊື້:**

- ການຈັດຊື້ ອຸປະກອນແຍກ Cell BTS : Optic Module ແມ່ນຢູ່ໃນຂັ້ນຕອນເຈລະຈາເງື່ອນການສົ່ງເຄື່ອງ, ການຄ່າໂອນ ເງິນຂ້າມປະເທດຜ່ານທະນາຄານ ແລະ ຄ່າເຄຍເອກະສານນໍາເຂົ້າປະເທດ ກັບບໍລິສັດ Ad-net. Inveter AD/DC ແມ່ນຢູ່ໃນຂັ້ນຕອນຄົ້ນຄ້ວາປຶກສາຫາລືເລືອກເອົາບໍລິສັດທີ່ມີສະເປັກເຕັກນິກຖືກຕ້ອງ, ລາຄາຕໍ່າກ່ວາໝູ່ແລ້ວລາຍ ງານຫາ ຄະນະກວດກາ ເພື່ອຂໍອະນຸມັດຕໍ່ລອງລາຄາ ແລະ ຈັດຊື້ເຄື່ອງດັ່ງກ່າວ.
- ການຈັດຊື້ ອຸປະກອນເພີ້ມລະບົບສູນກາງ Core network ໂທລະສັບມືຖື ແມ່ນຢູ່ໃນຂັ້ນຕອນຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ (ພພທ ເອົາເອກະສານກັບຄືນແລ້ວ).
- ການຈັດຊື້ ອຸປະກອນລະບົບສາຍສົ່ງ DWDM ແລະ ຂະຫຍາຍເພີ່ມລະບົບຮັບ-ສົ່ງຂໍ້ມູນ ແມ່ນຢູ່ໃນຂັ້ນຕອນ ຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ (ພພທ ເອົາເອກະສານກັບຄືນແລ້ວ).

- ການຈັດຊື້ ເຄື່ອງອຸປະກອນຮັບ-ສົ່ງສັນຍານໂທລະສັບມືຖື ລະບົບ 3G (NodeB) ຈຳນວນ 15 ຊຸດ ແມ່ນຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ IR Tools ເພື່ອປັບປຸງ ແລະ ແກ້ໄຂຄຸນນະພາບສັນຍານໂທລະສັບມືຖືໃຫ້ດີຂຶ້ນ ແມ່ນຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ ລາຍເຊັນເພີ່ມໃຫ້ລະບົບ Packet data Switch (PS) ແລະ RNC ແມ່ນຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ຈັດຊື້ ການບໍລິການບຳລຸງຮັກສາເຄື່ອງ ASB ແມ່ນຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ ເຄື່ອງຕັດຕໍ່ ແລະ ເຄື່ອງວັດແທກ ຈຳນວນ 11 ຊຸດ ແມ່ນຢູ່ໃນຂັ້ນຕໍ່ລອງລາຄາກັບບໍລິສັດ VINA-OFC.
- ການຜະລິດປະຕິທິນ ແມ່ນຢູ່ໃນຂັ້ນຕອນເຮັດຂໍ້ຕົກລົງ.
- ການຈັດຊື້ລາງວັນສຳລັບແຜນສົ່ງເສີມການຂາຍ:
    - ລົດ Toyota ຕໍ່ລອງເຮັດລາຍງານແລ້ວ.
    - ລົດ Hyundai Eon ເຮັດສັນຍາແລ້ວ.
    - ເສື້ອ, ໝວກກັບກະທິບ, ຄັນຮົ່ມເຮັດສັນຍາແລ້ວ.
    - ເຄື່ອງໃຊ້ໄຟຟ້າ ຕໍ່ລອງເຮັດລາຍງານແລ້ວ.
    - ໜ່ວຍໂທລະສັບຕໍ່ລອງລາຍງານແລ້ວ.

<u>ວຽກກໍ່ສ້າງຕິດຕັ້ງ</u>:

- ການປັບປຸງ, ບຳລຸງຮັກສາ, ສ້ອມແປງ ແລະ ຕິດຕັ້ງສາຍໃຍແກ້ວຢູ່ພາກກາງ ແລະ ພາກໃຕ້ ແມ່ນຄົ້ນຄ້ວາ, ປຶກສາຫາລືແລ້ວ. ລໍຖ້າ ພສສ ສະຫຼຸບບໍລິມາດວຽກທັງໝົດຄືນ ແລະ ລາຍງານໃຫ້ຄະນະກຳມະການ.
- ການກໍ່ສ້າງ-ຕິດຕັ້ງຕາຂ່າຍໄຟຟ້າເຂົ້າສະຖານີ Repeater ຢູ່ແຂວງ ຊຽງຂວາງຈຳນວນ 15 ສະຖານີ ແມ່ນມອບໃຫ້ ອທອ ສາຂາ ແຂວງ ຫາບທາມລາຄາຢູ່ແຂວງເລີຍ. ຢູ່ໃນຂັ້ນຕອນໃຫ້ແຂວງຫາບທາມລາຄາ (ໃບສະເໜີ ສະບັບເລກທີ: 0173/ພພທ.ອທອ, ລົງວັນທີ: 29/04/2013).
- ການປ່ຽນໝໍ້ແປງ 30 KVA ທີ່ເປເພ່ ຢູ່ສະຖານີ ບ້ານ ນາໂຄງ, ເມືອງ ຮຸນ, ແຂວງ ອຸດົມໄຊ ແມ່ນມອບໃຫ້ ອທອ ສາຂາ ແຂວງ ດຳເນີນຢູ່ແຂວງເລີຍ ຂໍລາຄານຳ ລັດວິສາຫະກິດໄຟຟ້າແລ້ວ (ໃບສະເໜີ ສະບັບ ເລກທີ: 0257/ອທອ.ອຊ, ລົງວັນທີ: 14/05/2013).

<u>ວຽກນຳເຂົ້າ</u>:

- ນຳເຂົ້າເຄື່ອງຂະຫຍາຍສັນຍານໂທລະສັບມືຖື(MCPA) ຈຳນວນ 30ຊຸດ ມູນຄ່າ 250.500 ໂດລາ.

## <u>ແຜນວຽກອາທິດຕໍ່ໄປ:</u>

- ສືບຕໍ່ສ້ອມແປງ ແລະ ປ່ຽນຖ່າຍອຸປະກອນຕ່າງໆ ທີ່ມີການເປເພພາຍໃນສຳນັກງານໃຫຍ່ ແລະ ສູນບໍລິການຢູ່ອ້ອມຂ້າງພາຍໃນ ອທອ ສູນກາງ.
- ສືບຕໍ່ຂຶ້ນບັນຊີຊັບສິນ ແລະ ຕິດລະຫັດຊັບສິນທີ່ໄດ້ຕັດຫາມາໃໝ່ຕາມປົກກະຕິ.
- ສືບຕໍ່ ເບີກຈ່າຍເຄື່ອງສິນຄ້າ ແລະ ອຸປະກອນໂທລະຄົມຕ່າງໆຕາມປົກກະຕິ.

## II. <u>ວຽກຕາມບົດບັນທຶກສ່ອງແສ່ງ:</u>

- ທາງພະແນກ ບໍລິຫານໄດ້ພົວພັນນຳບັນດາສາຂາແຂວງ ໃຫ້ເອົາໃຈໃສ່ຕື່ມໃນການກວດນັບ ຮັບເຄື່ອງ ແລະ ໄດ້ເອີ້ນບໍລິສັດ ຂົນສົ່ງມາປຶກສາຫາລືເຂັ້ມງວດໃນການຈັດສົ່ງເຄື່ອງທີ່ທາງ ອທອ ໄດ້ມອບໝາຍໃຫ້.
- ທາງພະແນກ ບໍລິຫານ ໄດ້ມີການຈັດຕັ້ງໜ້າວຽກຄືນໃໝ່ ແລະ ໄດ້ສົ່ງລາຍງານໃຫ້ພະແນກ ຈັດຕັ້ງພະນັກງານ.

## III. <u>ວຽກຄ້າງ:</u>

## IV. <u>ຂໍ້ສະເໜີ:</u>

- ຂໍຄໍາເຫັນ ແລະ ທິດທາງໃນການປະຕິບັດກ່ຽວກັບການລົງເຄື່ອນໄຫວຂຶ້ນທະບຽນທີ່ດິນຢູ່ ສາຂາ ອທອ ແຂວງ ພາກເໜືອເພາະໄດ້ຂຶ້ນແຜນສະເໜີໄປແລ້ວແຕ່ບໍ່ທັນມີຄວາມຊັດເຈນໃນການປະຕິບັດ.
- ຂໍຄໍາເຫັນ ແລະ ໃຫ້ທິດທາງໃນການປະຕິບັດກ່ຽວກັບໜ້າວຽກບໍລິມາດວຽກເພີ້ມຈໍານວນ 05 ແຜນການຄື :
    - ການດັດແກ້ໜ້າວຽກ ແລະ ວຽກຂັ້ນຝາເປັນຫ້ອງການຢູ່ ອທອ ສາຂາ ແຂວງ ຊຽງຂວາງ.
    - ການປັບປຸງກໍ່ສ້າງບີວລະບັດເດີ່ນ ແລະ ຮົ້ວ ອທອ ເມືອງ ທົ່ງສາ.
    - ການປັບປຸງກໍ່ສ້າງບີວລະບັດເດີ່ນ ແລະ ຮົ້ວ ອທອ ເມືອງ ສິງ.
    - ການປັບປຸງບີວລະບັດເດີ່ນ ຫ້ອງການ ສາຂາ ອທອ ສາຂາແຂວງ ຫຼວງນໍ້າທາ.
    - ການປັບປຸງບີວລະບັດເດີ່ນເພທາງເຂົ້າຫ້ອງການ ອທອ ສາຂາແຂວງ ອັດຕະປື.

ຫົວໜ້າພະແນກ ບໍລິຫານ

ຄໍາພອນ ດວງເດດ